**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ

ເລກທີ 1166 /ສທ

ນະຄອນຫຼວງວຽງຈັນ, ວັນທີ 27 JUN 2018

# ຂໍ້ຕົກລົງ
# ວ່າດ້ວຍການສົ່ງອອກ-ນຳເຂົ້າ ແລະ ສົ່ງຜ່ານອາຫານ

- ອີງຕາມ ກົດໝາຍວ່າດ້ວຍອາຫານ (ສະບັບປັບປຸງ) ເລກທີ 33/ສພຊ, ລົງວັນທີ 24 ກໍລະກົດ 2013;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ກະຊວງສາທາລະນະສຸກ, ສະບັບເລກທີ 96/ນຍ, ລົງວັນທີ 09 ມີນາ 2017;
- ອີງຕາມ ການຄົ້ນຄວ້າ ແລະ ການສະເໜີຂອງກົມອາຫານ ແລະ ຢາ.

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ກຳນົດຫຼັກການ, ລະບຽບການ, ວິທີການ ແລະ ມາດຕະການໃນການຄຸ້ມຄອງ, ກວດກາ ແລະ ຕິດຕາມການສົ່ງອອກ-ນຳເຂົ້າ, ນຳເຂົ້າຊົ່ວຄາວ ແລະ ສົ່ງຜ່ານອາຫານ ແລະ ທາດເພີ່ມອາຫານ ເພື່ອຮັບປະກັນໃຫ້ອາຫານມີຄຸນນະພາບ, ປອດໄພ ແລະ ມີຄຸນຄ່າທາງດ້ານໂພຊະນາການ ແນໃສ່ປົກປ້ອງສຸຂະພາບຂອງຜູ້ບໍລິໂພກ, ທັງເປັນການອຳນວຍຄວາມສະດວກທາງດ້ານການຄ້າອາຫານ ແລະ ມີຄວາມຍຸດຕິທຳ.

**ມາດຕາ 2 ການຄຸ້ມຄອງ ແລະ ກວດກາການສົ່ງອອກ-ນຳເຂົ້າ ແລະ ສົ່ງຜ່ານອາຫານ**

ການຄຸ້ມຄອງ ແລະ ກວດກາການສົ່ງອອກ-ນຳເຂົ້າ ແລະ ສົ່ງຜ່ານອາຫານ ແມ່ນການອອກອະນຸຍາດ, ການກວດກາ ແລະ ການຕິດຕາມອາຫານສົ່ງອອກ, ນຳເຂົ້າ ແລະ ສົ່ງຜ່ານ.

**ມາດຕາ 3 ການອະທິບາຍຄຳສັບ**

ບັນດາຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ມີຄວາມໝາຍດັ່ງນີ້:

1. **ອາຫານ** ໝາຍເຖິງ ວັດຖຸ ຫຼື ສານໃດໜຶ່ງ ຊຶ່ງຢູ່ໃນຮູບແບບ ສຳເລັດຮູບ, ເຄິ່ງສຳເລັດຮູບ ຫຼື ບໍ່ທັນໄດ້ປຸງແຕ່ງເຊັ່ນ: ອາຫານສົດ, ດິບ ເພື່ອການບໍລິໂພກຂອງຄົນລວມທັງເຄື່ອງດື່ມ, ຜະລິດຕະ

ພັນອື່ນ ແລະ ສານໃດໜຶ່ງທີ່ນຳໃຊ້ໃນການຜະລິດ, ການກະກຽມປຸງແຕ່ງ ຫຼື ການບຳບັດອາຫານ ແຕ່ບໍ່ລວມເອົາເຄື່ອງສຳອາງ, ຢາສູບ ແລະ ສານທີ່ນຳໃຊ້ເປັນຢາປົວພະຍາດ;

2. **ການສົ່ງອອກ-ນຳເຂົ້າ** ໝາຍເຖິງການນຳເອົາອາຫານອອກ ຫຼື ນຳເຂົ້າມາ ໃນ ສປປ ລາວ ລວມທັງການນຳເຂົ້າຊົ່ວຄາວ ແລະ ນຳເຂົ້າເພື່ອວາງສະແດງ;
3. **ການສົ່ງຜ່ານ** ໝາຍເຖິງການຂົນສົ່ງອາຫານໄປຍັງປະເທດທີ່ສາມ ທີ່ຜ່ານດິນແດນຂອງ ສປປ ລາວ;
4. **ການນຳເຂົ້າຊົ່ວຄາວ** ໝາຍເຖິງ ການນຳເຂົ້າອາຫານເພື່ອມາຜະລິດ, ແປຮູບ, ແບ່ງບັນຈຸ, ແບ່ງໃສ່ເພື່ອສົ່ງອອກຄືນ ຊຶ່ງບໍ່ອະນຸຍາດໃຫ້ຈຳໜ່າຍໃນ ສປປ ລາວ;
5. **ອາຫານທີ່ນຳເຂົ້າມາເພື່ອວາງສະແດງ** ໝາຍເຖິງອາຫານທີ່ອະນຸຍາດໃຫ້ນຳເຂົ້າສະເພາະການ ວາງສະແດງ ໃນປະລິມານຕາມທີ່ໄດ້ກຳນົດໃນກົດໝາຍພາສີ (ມາດຕາ 47);
6. **ທາດເພີ່ມອາຫານ** ໝາຍເຖິງສານໃດໜຶ່ງທີ່ເພີ່ມໃສ່ອາຫານ ເພື່ອຈຸດປະສົງທາງດ້ານເຕັກນິກ ລວມທັງຮູບຮ່າງ, ລົດຊາດ, ກິ່ນ, ສີ ແລະ ອື່ນໆ ທີ່ນຳໃຊ້ໃນການຜະລິດ, ການກະກຽມປຸງແຕ່ງ, ການບຳບັດ, ການຫຸ້ມຫໍ່, ການຂົນສົ່ງ ແລະ ການເກັບຮັກສາອາຫານ ຊຶ່ງອາດເປັນຜົນທາງກົງ ຫຼື ທາງອ້ອມ ຕໍ່ຄຸນລັກສະນະສະເພາະຂອງອາຫານ;
7. **ອົງການຄຸ້ມຄອງຄວາມປອດໄພອາຫານ** ໝາຍເຖິງອົງການທີ່ມີອຳນາດຄຸ້ມຄອງກ່ຽວກັບຄວາມປອດໄພອາຫານທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍອາຫານ (ຊຶ່ງເອີ້ນເປັນພາສາສາກົນວ່າ: Food Safety Authority (FSA));
8. **ການຮັບຮອງເອົາອົງກອນທີສາມ** ໝາຍເຖິງອົງກອນໃດໜຶ່ງ ທີ່ໄດ້ຮັບອະນຸຍາດ ໂດຍອົງການຄຸ້ມຄອງຄວາມປອດໄພອາຫານ ຂອງ ສປປ ລາວ ຫຼື ຈາກອົງການຄຸ້ມຄອງຄວາມປອດໄພອາຫານຂອງປະເທດສົ່ງອອກອາຫານ ເພື່ອປະຕິບັດກິດຈະກຳໃດໜຶ່ງທີ່ກ່ຽວຂ້ອງກັບການຄວບຄຸມຄວາມປອດໄພອາຫານ;
9. **ການຢັ້ງຢືນ** ໝາຍເຖິງການຮັບຮອງຢ່າງເປັນທາງການທາງດ້ານຄຸນນະພາບ ແລະ ຄວາມປອດໄພອາຫານ ໂດຍອົງການຄຸ້ມຄອງຄວາມປອດໄພອາຫານ ຫຼື ອົງກອນທີ່ສາມທີ່ຖືກຮັບຮູ້ເປັນທາງການ;
10. **ຫ້ອງວິໄຈອາຫານທີ່ເປັນທາງການ** ໝາຍເຖິງຫ້ອງວິໄຈອາຫານໃດໜຶ່ງທີ່ຖືກຮັບຮູ້ ແລະ ອະນຸຍາດຈາກກະຊວງສາທາລະນະສຸກ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ທີ່ດຳເນີນທຸລະກິດກ່ຽວກັບການສົ່ງອອກ-ນຳເຂົ້າ ແລະ ສົ່ງຜ່ານອາຫານ ແລະ ທາດເພີ່ມອາຫານ, ຊຶ່ງບໍ່ລວມເອົາການສົ່ງອອກ-ນຳເຂົ້າ ແລະ ສົ່ງຜ່ານຜະລິດຕະພັນກະສິກຳເບື້ອງຕົ້ນທີ່ຄຸ້ມຄອງໂດຍຂະແໜງການກະສິກຳ ແລະ ປ່າໄມ້.

**ມາດຕາ 5 ຫຼັກການການປະຕິບັດທາງດ້ານການຄ້າ**

ການປະຕິບັດທາງດ້ານການຄ້າ ຕ້ອງປະຕິບັດຕາມຫຼັກການດັ່ງນີ້:

1. **ການຮັບຮູ້ຊຶ່ງກັນ ແລະ ກັນ**

ກົມອາຫານ ແລະ ຢາ ຫຼື ອົງການຄຸ້ມຄອງຄວາມປອດໄພອາຫານ ຕ້ອງໄດ້ມີການຮັບຮູ້ຊຶ່ງກັນແລະ ກັນກັບບັນດາປະເທດຄູ່ຄ້າ ທີ່ມີລະບົບຄຸ້ມຄອງຄວາມປອດໄພອາຫານ ຫຼື ເງື່ອນໄຂຕ່າງໆ

ທີ່ມີຄວາມເທົ່າທຽມກັນ ຫຼື ມີການຕົກລົງສະເພາະລະຫວ່າງ ສປປ ລາວ ແລະ ປະເທດຄູ່ຄ້າ ທີ່ສອດຄ່ອງກັບຂໍ້ຕົກລົງສະບັບນີ້;

2. **ການບໍ່ຈຳແນກປະຕິບັດ**

ການສົ່ງອອກ-ນຳເຂົ້າ ແລະ ສົ່ງຜ່ານອາຫານ ຕ້ອງປະຕິບັດມາດຕະການໃນລັກສະນະເທົ່າທຽມກັນກັບທຸກປະເທດຄູ່ຄ້າ ແລະ ມີຄວາມສະເໝີພາບທັງພາຍໃນ ແລະ ຕ່າງປະເທດ;

3. **ຄວາມໂປ່ງໃສ**

ກົມອາຫານ ແລະ ຢາ ຕ້ອງສະໜອງຂໍ້ມູນກ່ຽວກັບລະບຽບການ ແລະ ມາດຕະການກ່ຽວກັບການສົ່ງອອກ-ນຳເຂົ້າ ແລະ ສົ່ງຜ່ານອາຫານ ທີ່ມີຢູ່ໃນປັດຈຸບັນ ຫຼື ຖ້າມີການປ່ຽນແປງຕ້ອງມີການປະກອບສ່ວນຮ່ວມກັບຫຼາຍພາກສ່ວນທີ່ກ່ຽວຂ້ອງ ໂດຍເຜີຍແຜ່ຜ່ານສື່ມວນຊົນ, ໃນຈົດໝາຍເຫດທາງລັດຖະການ ແລະ ຢູ່ທີ່ດ່ານນຳເຂົ້າຢ່າງທັນການວ່ອງໄວເພື່ອອຳນວຍຄວາມສະດວກທາງດ້ານການຄ້າ, ຍົກເວັ້ນໃນກໍລະນີສຸກເສີນ.

ກົມອາຫານ ແລະ ຢາ ຕ້ອງຮັບປະກັນໃຫ້ມີເວລາ ຫົກສິບວັນ ສໍາລັບການອອກຄໍາເຫັນກ່ຽວກັບລະບຽບການທີ່ໄດ້ນໍາສະເໜີ ເພື່ອການປ່ຽນແປງ.

## ພາກທີ II
## ການອະນຸຍາດສົ່ງອອກ-ນຳເຂົ້າ ແລະ ສົ່ງຜ່ານອາຫານ

### ມາດຕາ 6 ຫຼັກການທົ່ວໄປກ່ຽວກັບການສົ່ງອອກ - ນຳເຂົ້າ ແລະ ສົ່ງຜ່ານອາຫານ

ທຸລະກິດການສົ່ງອອກ-ນຳເຂົ້າ ແລະ ສົ່ງຜ່ານອາຫານ ຕ້ອງໄດ້ຈົດທະບຽນນຳ ກົມອາຫານ ແລະ ຢາ ຫຼື ຂະແໜງອາຫານ ແລະ ຢາ ແຂວງ, ນະຄອນ ຕາມການມອບໝາຍ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ທີ່ດຳເນີນທຸລະກິດກ່ຽວກັບການສົ່ງອອກ-ນຳເຂົ້າ ແລະ ສົ່ງຜ່ານອາຫານ ແມ່ນສາມາດຂໍອະນຸຍາດສົ່ງອອກ-ນຳເຂົ້າ ແລະ ສົ່ງຜ່ານ ຢູ່ແຂວງໃດກໍໄດ້ ແລະ ປະຕິບັດການສົ່ງອອກ-ນຳເຂົ້າ ແລະ ສົ່ງຜ່ານ ຕົວຈິງຢູ່ດ່ານທີ່ກຳນົດໄວ້ໃນຂອບເຂດທົ່ວປະເທດ.

ອາຫານນຳເຂົ້າທີ່ມີຄວາມສ່ຽງສູງ ແລະ ອາຫານໃໝ່ ຕ້ອງໄດ້ຮັບການຂຶ້ນທະບຽນຈາກ ກົມອາຫານ ແລະ ຢາ ກ່ອນການຂໍອະນຸຍາດນຳເຂົ້າ (ເອກະສານຊ້ອນທ້າຍ 5).

ການສົ່ງອອກ-ນຳເຂົ້າ ແລະ ສົ່ງຜ່ານອາຫານ ຕ້ອງແຈ້ງເອກະສານຕໍ່ເຈົ້າໜ້າທີ່ກວດກາອາຫານ ແລະ ຢາ ປະຈຳດ່ານ.

ອາຫານ ຕ້ອງສົ່ງອອກ-ນຳເຂົ້າ ແລະ ສົ່ງຜ່ານຕາມດ່ານສາກົນ, ດ່ານປະເພນີ ແລະ ດ່ານທ້ອງຖິ່ນ ຕາມບັນຊີ ທີ່ກະຊວງສາທາລະນະສຸກກຳນົດ.

### ມາດຕາ 7 ເງື່ອນໄຂຂອງຜູ້ສົ່ງອອກ-ນຳເຂົ້າ ແລະ ສົ່ງຜ່ານອາຫານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງ ສົ່ງອອກ-ນຳເຂົ້າ ແລະ ສົ່ງຜ່ານອາຫານໃນ ສປປ ລາວ ຕ້ອງປະຕິບັດຕາມກົດໝາຍວ່າດ້ວຍອາຫານ (ສະບັບປັບປຸງ), ມາດຕາ 34, 35, 36, 40, 41 ແລະ ຂໍ້ຕົກລົງສະບັບນີ້, ຍົກເວັ້ນການນຳເຂົ້າອາຫານເພື່ອການບໍລິໂພກສ່ວນຕົວ.

ຜູ້ສົ່ງອອກ-ນໍາເຂົ້າ ແລະ ສົ່ງຜ່ານອາຫານ ຕ້ອງແມ່ນບໍລິສັດຂາອອກ-ຂາເຂົ້າອາຫານ, ໂຮງງານຜະລິດອາຫານ, ອົງການຈັດຕັ້ງຂອງລັດ, ອົງການຈັດຕັ້ງສາກົນ, ອົງການຈັດຕັ້ງ ທີ່ບໍ່ແມ່ນລັດຖະບານ ແລະ ມູນນິທິຕ່າງໆ ຊຶ່ງຕ້ອງມີເງື່ອນໄຂດັ່ງນີ້:

1. ຕ້ອງມີສະຖານທີ່ເໝາະສົມໃນການເກັບຮັກສາ ແລະ ແຈກຢາຍອາຫານຕາມມາດຕະຖານທີ່ໄດ້ກໍານົດໄວ້ເຊັ່ນ: ສາງ, ຫ້ອງເຢັນສໍາລັບອາຫານທີ່ຕ້ອງຮັກສາຢູ່ໃນຄວາມເຢັນ, ພາຫະນະຂົນສົ່ງ ແລະ ອຸປະກອນທີ່ເໝາະສົມ ເພື່ອຮັບປະກັນຄວາມປອດໄພ ແລະ ຄຸນນະພາບຂອງອາຫານ ໃຫ້ຄົງຢູ່ໃນສະພາບເດີມ;
2. ມີວິຊາການທີ່ໄດ້ຜ່ານການຝຶກອົບຮົມຂັ້ນພື້ນຖານ ດ້ານຄວາມປອດໄພອາຫານ;
3. ມີລະບົບຕິດຕາມ ແລະ ຮຽກຄືນຜະລິດຕະພັນອາຫານ ທີ່ມີບັນຫາທາງດ້ານຄຸນນະພາບ ແລະ ຄວາມປອດໄພ;
4. ຕ້ອງຮັບປະກັນວ່າອາຫານທີ່ນໍາເຂົ້າມາຮອດ ສປປ ລາວ ຕ້ອງມີອາຍຸການບໍລິໂພກໃຫ້ເຫຼືອຢ່າງນ້ອຍ 60 ເປີເຊັນ ກ່ອນໝົດອາຍຸ, ບັນລຸມາດຕະຖານ, ມີຄຸນນະພາບ ແລະ ມີຄວາມປອດໄພ ຍົກເວັ້ນອາຫານສົ່ງຜ່ານ.
5. ຜູ້ສົ່ງຜ່ານອາຫານ ຕ້ອງຍື່ນເອກະສານຕາມແບບຟອມທີ່ໄດ້ກໍານົດໄວ້ ຢ່າງໜ້ອຍ 05 ວັນລັດຖະການ ກ່ອນວັນທີຈະສົ່ງຜ່ານ ຢູ່ກົມອາຫານ ແລະ ຢາ ຫຼື ຂະແໜງອາຫານ ແລະ ຢາ ແຂວງ, ນະຄອນ ທີ່ໄດ້ຮັບການມອບໝາຍ ເພື່ອພິຈາລະນາ ພ້ອມທັງເສຍຄ່າທໍານຽມ.

**ມາດຕາ 8 ຄ່າທໍານຽມການ ສົ່ງອອກ -ນໍາເຂົ້າ ແລະ ສົ່ງຜ່ານ**

ຜູ້ດໍາເນີນທຸລະກິດອາຫານ ຕ້ອງໄດ້ຈ່າຍຄ່າທໍານຽມການບໍລິການຕ່າງໆທີ່ພົວພັນເຖິງການກວດກາ, ການເກັບຕົວຢ່າງ, ການກວດສອບ ແລະ ການຢັ້ງຢືນ ອາຫານສົ່ງອອກ-ນໍາເຂົ້າ ແລະ ສົ່ງຜ່ານຕາມລະບຽບການທີ່ໄດ້ກໍານົດໃນລັດຖະດໍາລັດຂອງປະທານປະເທດໃນແຕ່ລະໄລຍະ.

## ໝວດທີ 1
## ການສົ່ງອອກອາຫານ

**ມາດຕາ 9 ຫຼັກການຢັ້ງຢືນການສົ່ງອອກ**

1. ອາຫານໃດໜຶ່ງ ທີ່ສົ່ງອອກຈາກ ສປປ ລາວ ຕ້ອງບັນລຸມາດຕະຖານ, ຄຸນນະພາບ ແລະ ຄວາມປອດໄພຕາມທີ່ກໍານົດໄວ້ໃນ ກົດໝາຍວ່າດ້ວຍອາຫານ ມາດຕາ 34, ຕ້ອງປະຕິບັດຕາມລະບຽບການຂອງປະເທດຜູ້ນໍາເຂົ້າ.
2. ໃບຢັ້ງຢືນການສົ່ງອອກອາຫານ ຕ້ອງອອກໃຫ້ໂດຍກົມອາຫານ ແລະ ຢາ ຫຼື ຂະແໜງອາຫານ ແລະ ຢາ ແຂວງ, ນະຄອນ ທີ່ໄດ້ຮັບມອບໝາຍ.

**ມາດຕາ 10 ການປະກອບເອກະສານຂໍໃບຢັ້ງຢືນການສົ່ງອອກອາຫານ**

ຜູ້ສົ່ງອອກອາຫານ ທີ່ຕ້ອງການໃບຢັ້ງຢືນການສົ່ງອອກ ແມ່ນໃຫ້ສະເໜີເຖິງ ກົມອາຫານ ແລະ ຢາ ຫຼື ຂະແໜງອາຫານ ແລະ ຢາ ແຂວງ, ນະຄອນ ຕາມແບບຟອມ, ພ້ອມກັບການເສັຍຄ່າທໍານຽມ ທີ່ໄດ້ກໍານົດໄວ້.

ເອກະສານທີ່ປະກອບ ເພື່ອຂໍໃບຢັ້ງຢືນການສົ່ງອອກມີດັ່ງນີ້:

1. ໃບຄໍາຮ້ອງຂອງບໍລິສັດ/ໂຮງງານ (ເອກະສານຊ້ອນທ້າຍ 1)
2. ໃບແຈ້ງລາຄາ;
3. ໃບຢັ້ງຢືນຄວາມປອດໄພອາຫານ ຫຼື ລະບົບຄຸ້ມຄອງຄວາມປອດໄພອາຫານໃດໜຶ່ງເຊັ່ນ: ໃບທະບຽນອາຫານ, ໃບຢັ້ງຢືນຄຸນນະພາບຂອງຜະລິດຕະພັນອາຫານ, GMP/HACCP, ISO 22000 ແລະ ໃບຢັ້ງຢືນອື່ນໆ;
4. ໃບທະບຽນວິສາຫະກິດ;
5. ໃບອະນຸຍາດດໍາເນີນທຸລະກິດ.

**ມາດຕາ 11 ຂັ້ນຕອນຂໍໃບຢັ້ງຢືນການສົ່ງອອກອາຫານ**

ຜູ້ສົ່ງອອກອາຫານ ຕ້ອງຍື່ນເອກະສານຕາມແບບຟອມທີ່ໄດ້ກໍານົດໄວ້ ຢ່າງໜ້ອຍ 05 ວັນລັດຖະການ ກ່ອນວັນທີຈະສົ່ງອອກ ຢູ່ກົມອາຫານ ແລະ ຢາ ຫຼື ຂະແໜງອາຫານ ແລະ ຢາ ແຂວງ, ນະຄອນ ທີ່ໄດ້ຮັບການມອບໝາຍ ເພື່ອພິຈາລະນາ ພ້ອມທັງເສຍຄ່າທໍານຽມ.

**ມາດຕາ 12 ການອອກໃບຢັ້ງຢືນການສົ່ງອອກ**

1. ກົມອາຫານ ແລະ ຢາ ຫຼື ຂະແໜງອາຫານ ແລະ ຢາ ແຂວງ, ນະຄອນ ຈະອອກໃບຢັ້ງຢືນໃຫ້ຜູ້ສົ່ງອອກ ພາຍໃນ 03 ວັນ ລັດຖະການພາຍຫຼັງໄດ້ຮັບເອກະສານຄົບຖ້ວນ;
2. ໃບຢັ້ງຢືນການສົ່ງອອກ ແມ່ນໃຊ້ໄດ້ຄັ້ງດຽວເທົ່ານັ້ນ;
3. ຜູ້ສົ່ງອອກອາຫານຕ້ອງແຈ້ງໃບຢັ້ງຢືນສົ່ງອອກຕໍ່ເຈົ້າໜ້າທີ່ກວດກາອາຫານ ແລະ ຢາ ທີ່ປະຈໍາດ່ານ.

## ໝວດທີ 2
## ການນໍາເຂົ້າອາຫານ

**ມາດຕາ 13 ຫຼັກການທົ່ວໄປກ່ຽວກັບການນໍາເຂົ້າອາຫານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ທີ່ດາເນີນທຸລະກິດກ່ຽວກັບການ ນໍາເຂົ້າ ອາຫານເພື່ອຈໍາໜ່າຍຈະຕ້ອງໄດ້ຈົດທະບຽນນໍາກົມອາຫານແລະຢາ ຫຼື ພະແນກສາທາລະນະສຸກແຂວງຕາມການມອບໝາຍ ແລະສະຖານທີ່ຕັ້ງຂອງທຸລະກິດ.

ການນໍາເຂົ້າອາຫານຕ້ອງປະຕິບັດຕາມກົດໝາຍ, ລະບຽບການ ແລະ ມາດຕະຖານອາຫານຂອງ ສປປ ລາວ ແລະ ຕ້ອງຮັບປະກັນອາຫານມີຄວາມປອດໄພ ແລະເໝາະສົມແກ່ການບໍລິໂພກ

ອາຫານທີ່ມີຄວາມສ່ຽງສູງຈະຕ້ອງໄດ້ຈົດທະບຽນກ່ອນການອະນຸຍາດນຳເຂົ້າ, ອາຫານຄວາມສ່ຽງກາງ ແລະ ຕໍ່າ ແມ່ນສາມາດຂໍອະນຸຍາດນຳເຂົ້າໄດ້ເລີຍ (ເອກະສານຊ້ອນທ້າຍລາຍການອາຫານຕາມຄວາມສ່ຽງ).

**ມາດຕາ 14 ການປະກອບເອກະສານຂໍອະນຸຍາດນຳເຂົ້າ**

ເອກະສານທີ່ຕ້ອງປະກອບ ເພື່ອຂໍອະນຸຍາດນຳເຂົ້າມີດັ່ງນີ້:

1. ໃບຄຳຮ້ອງຂໍອະນຸຍາດນຳເຂົ້າອາຫານ (ເອກະສານຊ້ອນທ້າຍ 2) (1 ສະບັບ);
2. ໃບແຈ້ງລາຄາສິນຄ້າ (2 ສະບັບ);
3. ໃບມັດທໍ່ສິນຄ້າ (2 ສະບັບ);
4. ໃບຢັ້ງຢືນຮັບຮອງຄວາມປອດໄພອາຫານໃດໜຶ່ງຈາກປະເທດສົ່ງອອກເຊັ່ນ: ໃບຢັ້ງຢືນການຂຶ້ນທະບຽນ,ໃບຢັ້ງຢືນການຈຳໜ່າຍ(Free sale Certificate), ໃບຢັ້ງຢືນ GHP, GMP, HACCP, ISO 22000 ຫຼື ການຢັ້ງຢືນອື່ນໆຈາກອົງການຄຸ້ມຄອງຄວາມປອດໄພອາຫານຂອງປະເທດສົ່ງອອກ ຢ່າງໜ້ອຍຍັງມີອາຍຸການນຳໃຊ້ໄດ້ 03ເດືອນ (ເປັນພາສາອັງກິດ ແລະ ສະບັບແທ້, ຖ້າສະບັບສຳເນົາ ໃຫ້ຈ້ຳກາຂອງບໍລິສັດນຳເຂົ້າ) (1 ສະບັບ)
5. ໃບຢັ້ງຢືນການວິໄຈຈາກອົງການຄຸ້ມຄອງຄວາມປອດໄພອາຫານຂອງປະເທດສົ່ງອອກ ຫຼື ຫ້ອງວິໄຈທີ່ໄດ້ຮັບຮອງຢ່າງເປັນທາງການຢ່າງໜ້ອຍຍັງມີອາຍຸການນຳໃຊ້ໄດ້ສຳລັບຊຸດຜະລິດນັ້ນ (ເປັນພາສາອັງກິດ ແລະ ສະບັບແທ້, ຖ້າສະບັບສຳເນົາໃຫ້ຈ້ຳກາຂອງບໍລິສັດນຳເຂົ້າ) (2 ສະບັບ)
6. ໃບທະບຽນວິສາຫະກິດ (1 ສະບັບ);
7. ມີສະຫຼາກ ຫຼື ສະຕິກເກີ ເປັນພາສາລາວ (1 ສະບັບ);
8. ຕົວຢ່າງຜະລິດຕະພັນອາຫານ (ຊະນິດລະ1 ຕົວຢ່າງ);
9. ໃບຢັ້ງຢືນການຂຶ້ນທະບຽນອາຫານຂອງ ສປປ ລາວ (ຖ້າມີ)(1 ສະບັບ).

**ມາດຕາ 15 ຂັ້ນຕອນການຂໍອະນຸຍາດນຳເຂົ້າ**

ຜູ້ນຳເຂົ້າອາຫານ ຕ້ອງຍື່ນເອກະສານຕາມແບບຟອມທີ່ໄດ້ກຳນົດໄວ້ ຢ່າງໜ້ອຍ 05 ວັນລັດຖະການ ກ່ອນວັນທີຈະນຳເຂົ້າ ຢູ່ກົມອາຫານ ແລະ ຢາ ຫຼື ຂະແໜງອາຫານ ແລະ ຢາ ແຂວງ, ນະຄອນ ທີ່ໄດ້ຮັບການມອບໝາຍ ເພື່ອພິຈາລະນາ ພ້ອມທັງເສຍຄ່າທຳນຽມ.

**ມາດຕາ 16 ການພິຈາລະນາອອກໃບອະນຸຍາດນຳເຂົ້າ**

1. ການພິຈາລະນາອອກອະນຸຍາດນຳເຂົ້າອາຫານແມ່ນຈະປະຕິບັດບົນພື້ນອາຫານທີ່ມີຄວາມສ່ຽງຊຶ່ງກົມອາຫານ ແລະ ຢາຈະໄດ້ມີຂໍ້ແນະນຳສະເພາະ.
2. ກົມອາຫານ ແລະ ຢາ ຫຼື ຂະແໜງອາຫານ ແລະ ຢາ ແຂວງ, ນະຄອນ ຈະອອກໃບອະນຸຍາດນຳເຂົ້າອາຫານ ໃຫ້ຜູ້ນຳເຂົ້າ ພາຍໃນກຳນົດ 03 ວັນ ລັດຖະການພາຍຫຼັງໄດ້ຮັບເອກະສານຄົບຖ້ວນ;
3. ໃບອະນຸຍາດນຳເຂົ້າ ແມ່ນໃຊ້ໄດ້ຄັ້ງດຽວ ພາຍໃນໄລຍະເວລາ 30 ວັນ ລັດຖະການ ແລະ ໃນກໍລະນີໝົດອາຍຸແຕ່ຍັງບໍ່ໄດ້ນຳເຂົ້າ ແມ່ນສາມາດຂໍຕໍ່ໄດ້ອີກໜຶ່ງຄັ້ງ ແລະ ມີອາຍຸການນຳໃຊ້ໄດ້ 30 ວັນ ລັດຖະການ;

4. ຜູ້ນຳເຂົ້າອາຫານ ຕ້ອງແຈ້ງໃບອະນຸຍາດນຳເຂົ້າ ຕໍ່ເຈົ້າໜ້າທີ່ກວດກາອາຫານ ແລະ ຢາ ທີ່ປະຈຳດ່ານ.

**ມາດຕາ 17 ການກວດສອບສະຖານທີ່ຕົ້ນກຳເນີດຜະລິດຕະພັນອາຫານ**

ເພື່ອປະຕິບັດຕາມການຕົກລົງທາງດ້ານການຄ້າສອງຝ່າຍ ຫຼື ຫຼາຍຝ່າຍ ທີ່ຮັບຮູ້ຊຶ່ງກັນ ແລະ ກັນໃນການອອກອະນຸຍາດນຳເຂົ້າ, ອົງການຄຸ້ມຄອງຄວາມປອດໄພອາຫານ ຂອງ ສປປ ລາວ ສາມາດຕິດຕໍ່ປະສານງານກັບອົງການຄຸ້ມຄອງຄວາມປອດໄພອາຫານ ຂອງປະເທດສົ່ງອອກ ເພື່ອດຳເນີນການກວດສອບສະຖານທີ່ຜະລິດອາຫານ ໃນປະເທດຕົ້ນກຳເນີດ ບົນພື້ນຖານການຮ່ວມມື ແລະ ລະບຽບການທີ່ກຳນົດໄວ້.

ກໍລະນີ ການສະເໜີຂໍກວດສອບສະຖານທີ່ຜະລິດອາຫານ ຖືກປະຕິເສດ, ຜະລິດຕະພັນອາຫານນຳເຂົ້າດັ່ງກ່າວ ຈະບໍ່ອະນຸຍາດນຳເຂົ້າ ໃນ ສປປ ລາວ.

**ມາດຕາ 18 ການກຳນົດສະຖານະພາບ ແລະ ລະດັບຂອງການກວດກາ**

ກົມອາຫານ ແລະ ຢາ ເປັນຜູ້ກຳນົດສະຖານະພາບ ແລະ ລະດັບການກວດກາຜູ້ນຳເຂົ້າອາຫານໂດຍອີງໃສ່ຂໍ້ຕົກລົງວ່າດ້ວຍການກວດກາອາຫານ ເລກທີ 297/ກຊສ 2012; ມາດຕາ 5, ມາດຕາ 6 ແລະ ຄູ່ມືການກວດກາ ເພື່ອກຳນົດສະຖານະພາບທີ່ແທ້ຈິງ ແລະ ຄວາມຖີ່ຂອງການກວດກາ.

ຂະແໜງອາຫານ ແລະ ຢາ ແຂວງ, ນະຄອນ ເປັນຜູ້ສະເໜີກົມອາຫານ ແລະ ຢາ ໃນການຈັດສະຖານະພາບໂດຍການສະໜອງຂໍ້ມູນການກວດກາ, ການປະເມີນຄວາມສ່ຽງ, ປະຫວັດຄວາມເປັນມາຂອງຜູ້ປະກອບການທຸລະກິດອາຫານ.

**ມາດຕາ 19 ການມອບໝາຍໜ້າທີ່ ຈາກກົມອາຫານ ແລະ ຢາ ໃຫ້ແກ່ອົງກອນທີສາມ**

ກົມອາຫານ ແລະ ຢາ ເປັນຜູ້ພິຈາລະນາມອບໝາຍ ໃຫ້ອົງກອນທີສາມ ຊຶ່ງລວມທັງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງພາກລັດ ຫຼື ເອກກະຊົນ ໃຫ້ປະຕິບັດໜ້າທີ່ກ່ຽວກັບການຄວບຄຸມອາຫານນຳເຂົ້າແທນຕົນດັ່ງຕໍ່ໄປນີ້:

1. ປະຕິບັດການກວດກາ;
2. ເກັບຕົວຢ່າງ;
3. ທົດສອບ ແລະ ວິໄຈອາຫານ;

ໃນການປະຕິບັດກິດຈະກຳຂ້າງເທິງນີ້, ບຸກຄົນທີ່ສາມ ຫຼື ຜູ້ທີ່ຖືກມອບໝາຍຈະຖືກຕິດຕາມ ແລະ ປະເມີນຜົນຂອງການຈັດຕັ້ງປະຕິບັດໃຫ້ມີຄວາມສອດຄ່ອງກັບຂອບເຂດຈຸດປະສົງ ແລະ ເປົ້າໝາຍຕາມທີ່ໄດ້ຮັບການມອບໝາຍ.

ບຸກຄົນທີ່ສາມ ຫຼື ຜູ້ທີ່ຖືກມອບໝາຍຕ້ອງສະຫຼຸບລາຍງານຜົນການຈັດຕັ້ງປະຕິບັດໃຫ້ກົມອາຫານ ແລະ ຢາຕາມທີ່ໄດ້ກຳນົດ.

**ມາດຕາ 20 ການຮັບຮູ້ໃບຢັ້ງຢືນ**

ກົມອາຫານ ແລະ ຢາ, ຂະແໜງອາຫານ ແລະ ຢາແຂວງ, ນະຄອນ ຈະຮັບຮູ້ໃບຢັ້ງຢືນຄວາມປອດໄພອາຫານທີ່ອອກໃຫ້ໂດຍອີງການຄຸ້ມຄອງຄວາມປອດໄພອາຫານຂອງປະເທດຜູ້ສົ່ງອອກ ຫຼື ບຸກຄົນທີສາມທີ່ບັນລຸຕາມເງື່ອນໄຂການນໍາເຂົ້າອາຫານຂອງ ສປປ ລາວ.

**ມາດຕາ 21 ການນໍາເຂົ້າອາຫານຮັບໃຊ້ສ່ວນບຸກຄົນ**

ບຸກຄົນໃດໜຶ່ງທີ່ມີຈຸດປະສົງນໍາເຂົ້າອາຫານມາເພື່ອການບໍລິໂພກສ່ວນຕົວ, ຄອບຄົວ ແລະ ອື່ນໆທີ່ບໍ່ແມ່ນການຄ້າ ອາຫານດັ່ງກ່າວຕ້ອງບໍ່ເກີນປະລິມານທີ່ກໍານົດດັ່ງລຸ່ມນີ້:

1. ຊີ້ນ ແລະ ຜະລິດຕະພັນຊີ້ນທຸກຊະນິດ (ລວມທັງປາ ແລະ ສັດປີກ) ໃນຮູບແບບດິບ ຫຼື ສຸກ ແມ່ນອະນຸຍາດໃຫ້ນໍາເຂົ້າມາບໍ່ເກີນ 5 ກິໂລກຼາມຕໍ່ຄົນ;
2. ອາຫານທະເລທຸກຊະນິດ ໃນຮູບແບບດິບ ຫຼື ສຸກ ແມ່ນອະນຸຍາດໃຫ້ນໍາເຂົ້າມາບໍ່ເກີນ 5 ກິໂລກຼາມຕໍ່ຄົນ;
3. ອາຫານທຸກຊະນິດທີ່ຜ່ານຂະບວນການຜະລິດ ແລະ ປຸງແຕ່ງ ລວມທັງຊີ້ນ, ປາ, ສັດປີກ,ອາຫານທະເລ, ໝາກໄມ້ ແລະ ຜັກ ແມ່ນອະນຸຍາດນໍາເຂົ້າອາຫານແຕ່ລະຊະນິດບໍ່ໃຫ້ເກີນ 5 ກິໂລກຼາມ;
4. ອາຫານເສີມ, ນົມຜົງສໍາລັບເດັກແດງ ແລະ ອາຫານສໍາລັບເດັກແດງ ແມ່ນອະນຸຍາດໃຫ້ນໍາເຂົ້າມາບໍ່ເກີນ 2 ກິໂລກຼາມຕໍ່ຄົນ.

## ໝວດທີ 3
## ການສົ່ງຜ່ານອາຫານ

**ມາດຕາ 22 ຫຼັກການທົ່ວໄປຂອງການສົ່ງຜ່ານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຈະຂົນສົ່ງອາຫານ ຈາກປະເທດໃດໜຶ່ງຜ່ານ ສປປ ລາວ ໄປຫາ ປະເທດທີສາມ ຕ້ອງໄດ້ຂໍອະນຸຍາດສົ່ງຜ່ານ ຈາກກົມອາຫານ ແລະ ຢາ ຂະແໜງອາຫານ ແລະ ຢາ ແຂວງ, ນະຄອນ ຕາມຫຼັກການດັ່ງນີ້:

1. ແຈ້ງເອກະສານຂໍອະນຸຍາດສົ່ງຜ່ານທາງການ ຕໍ່ເຈົ້າໜ້າກວດກາອາຫານ ແລະ ຢາປະຈໍາດ່ານຂາເຂົ້າ-ຂາອອກ ຂອງ ສປປ ລາວ;
2. ຖ້າມີການຄ່ຽນຖ່າຍສິນຄ້າໃສ່ລົດບັນທຸກອື່ນ ຫຼື ລົງສາງກ່ອນການສົ່ງຜ່ານນັ້ນ ຕ້ອງໄດ້ຜ່ານການກວດກາ ແລະ ຢັ້ງຢືນຈາກເຈົ້າໜ້າທີ່ກວດກາອາຫານ ແລະ ຢາ ຕາມລະບຽບການກ່ຽວກັບການສົ່ງຜ່ານ ທີ່ໄດ້ກໍານົດໄວ້ໃນມາດຕາ 36 ຂອງກົດໝາຍວ່າດ້ວຍອາຫານ;
3. ຮັບປະກັນວ່າ ການສົ່ງອາຫານຜ່ານດິນແດນຂອງ ສປປ ລາວ ໄດ້ດໍາເນີນໂດຍວິທີການ ທີ່ຮັບປະກັນບໍ່ໃຫ້ເກີດມີຄວາມສ່ຽງ ຫຼື ແຜ່ກະຈາຍພະຍາດ ທີ່ເກີດມາຈາກອາຫານດັ່ງກ່າວຢູ່ໃນ ສປປ ລາວ.

**ມາດຕາ 23 ການປະກອບເອກະສານຂໍອະນຸຍາດສົ່ງຜ່ານ**

ເອກະສານທີ່ຕ້ອງປະກອບ ເພື່ອຂໍອະນຸຍາດສົ່ງຜ່ານມີດັ່ງນີ້:

1. ໃບຄໍາຮ້ອງຂໍອະນຸຍາດສົ່ງຜ່ານອາຫານ (ເອກະສານຊ້ອນທ້າຍ 3) (1 ສະບັບ);

2. ໃບແຈ້ງລາຄາສິນຄ້າ (2 ສະບັບ);
3. ໃບສັ່ງຊື້ສິນຄ້າ (2 ສະບັບ)
4. ໃບຂົນສົ່ງສິນຄ້າ (ຖ້າມີ) (1 ສະບັບ)
5. ໃບທະບຽນວິສາຫະກິດ (ຖ້າບໍລິສັດ ຫຼື ໂຮງງານຕັ້ງຢູ່ ສປປ ລາວ) (1 ສະບັບ);
6. ໃບຢັ້ງຢືນຮັບຮອງຄວາມປອດໄພອາຫານໃດໜຶ່ງຈາກປະເທດສົ່ງອອກເຊັ່ນ:ໃບຢັ້ງຢືນການຂຶ້ນທະບຽນ, ໃບຢັ້ງຢືນການຈໍາໜ່າຍ, ໃບຢັ້ງຢືນ GHP, GMP, HACCP, ISO 22000 ແລະ ອື່ນໆ (ເປັນພາສາອັງກິດ)(2 ສະບັບ)

**ມາດຕາ 24 ຂັ້ນຕອນການຂໍອະນຸຍາດສົ່ງຜ່ານ**

ຜູ້ສົ່ງຜ່ານອາຫານ ຕ້ອງຍື່ນເອກະສານຕາມແບບຟອມທີ່ໄດ້ກໍານົດໄວ້ຢ່າງໜ້ອຍ 05 ວັນລັດຖະການກ່ອນວັນທີຈະສົ່ງຜ່ານ ຢູ່ກົມອາຫານ ແລະ ຢາ ຫຼື ຂະແໜງອາຫານ ແລະ ຢາ ແຂວງ, ນະຄອນ ທີ່ໄດ້ຮັບການມອບໝາຍ ເພື່ອພິຈາລະນາ ພ້ອມທັງເສຍຄ່າທໍານຽມ.

## ພາກທີ III
## ການກວດກາຢູ່ດ່ານ

**ມາດຕາ 25 ຂັ້ນຕອນການກວດກາຢູ່ດ່ານ**

ເມື່ອອາຫານເຂົ້າມາເຖິງດ່ານ, ເຈົ້າໜ້າທີ່ກວດກາອາຫານ ແລະ ຢາປະຈາດ່ານ ຕ້ອງໄດ້ກວດກາອາຫານສົ່ງອອກ-ນໍາເຂົ້າ ແລະ ສົ່ງຜ່ານ ຢູ່ດ່ານກວດກາທີ່ໄດ້ກໍານົດໄວ້ ຕາມຂັ້ນຕອນ ໃນຄູ່ມືແນະນໍາການກວດກາ ແລະ ຕ້ອງໄດ້ປະສານສົມທົບກັບ ເຈົ້າໜ້າທີ່ພາສີ, ເຈົ້າໜ້າທີ່ກວດກາ ສຸຂະພາບສັດ ແລະ ພືດປະຈໍາດ່ານ, ຖ້າມີຄວາມຈໍາເປັນ.

ການກວດກາອາຫານປະຈໍາດ່ານ, ເຈົ້າໜ້າທີ່ກວດກາອາຫານ ແລະ ຢາປະຈາດ່ານ ຕ້ອງປະຕິບັດດັ່ງນີ້:

1. ກວດກາຄວາມຖືກຕ້ອງຂອງເອກະສານ;
2. ກວດກາອາຫານຕົວຈິງສົມທຽບໃສ່ເອກະສານ;
3. ເກັບຕົວຢ່າງອາຫານ ແລະ ທົດສອບກັບທີ່ ຕາມທີ່ໄດ້ກໍານົດໄວ້ໃນຄູ່ມືການກວດກາອາຫານ;
4. ລົງລາຍເຊັນ ແລະ ປະທັບຕາກວດຜ່ານໃສ່ເອກະສານ ສົ່ງອອກ-ນໍາເຂົ້າ ແລະ ສົ່ງຜ່ານ ທີ່ບັນລຸຕາມເງື່ອນໄຂ;
5. ກໍລະນີ ອາຫານນໍາເຂົ້າ ທີ່ຕ້ອງໄດ້ເກັບຮັກສາໄວ້ໃນອຸນຫະພູມສະເພາະ, ແຕ່ຢູ່ໃນດ່ານນໍາເຂົ້າ ບໍ່ມີສິ່ງອໍານວຍຄວາມສະດວກດັ່ງກ່າວ, ຜູ້ນໍາເຂົ້າຕ້ອງຍ້າຍ ແລະ ເກັບຮັກສາອາຫານໄວ້ ຢູ່ໃນສະຖານທີ່ ທີ່ມີເງື່ອນໄຂເໝາະສົມ, ໂດຍບໍ່ໃຫ້ແຈກຢາຍ ຫຼື ຈໍາໜ່າຍເດັດຂາດ ຈົນກ່ວາການກວດກາຈາກເຈົ້າໜ້າທີ່ກວດກາປະຈໍາດ່ານ ແລະ ເຈົ້າໜ້າທີ່ພາສີ ສໍາເລັດ ພາຍໃນ 48 ຊົ່ວໂມງ.
6. ອາຫານທີ່ມີຄວາມຈໍາເປັນກວດກາເພີ່ມເຕີມ, ທົດສອບ ແລະ ວິໄຈ ແມ່ນຕ້ອງໄດ້ກັກໄວ້ຊົ່ວຄາວຈົນກວ່າຈະໄດ້ຮັບຜົນການຢັ້ງຢືນການທົດສອບ ແລະ ວິໄຈ;
7. ການປະຕິເສດ ການສົ່ງອອກ-ນໍາເຂົ້າ ແລະ ສົ່ງຜ່ານອາຫານ ຕ້ອງໄດ້ແຈ້ງເຫດຜົນເປັນທາງການໃຫ້ເຈົ້າຂອງຜະລິດຕະພັນ ເພື່ອຮັບຮູ້ ແລະ ປະຕິບັດຕາມລະບຽບທີ່ໄດ້ກໍານົດໄວ້.

ອາຫານຕ້ອງ ສົ່ງອອກ-ນຳເຂົ້າ ແລະ ສົ່ງຜ່ານ ຕາມດ່ານສາກົນ ຫຼື ດ່ານປະເພນີ ຕາມທີ່ໄດ້ກຳນົດຈາກກະຊວງສາທາລະນະສຸກ (ເອກະສານຊ້ອນທ້າຍທີ 4)

ດ່ານກວດກາການສົ່ງອອກ-ນຳເຂົ້າ ແລະ ສົ່ງຜ່ານອາຫານ ຕ້ອງໄດ້ກຳນົດຂຶ້ນເປັນລາຍການໂດຍການປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ.

**ມາດຕາ 26 ການປ່ອຍອາຫານແບບມີເງື່ອນໄຂ - ການກວດການອກສະຖານທີ່**

ໃນກໍລະນີການກວດກາອາຫານຕ້ອງໄດ້ດຳເນີນການກວດກາໃນສະຖານທີ່ອື່ນຕາມທີ່ກຳນົດໄວ້ໃນມາດຕາ 23 ຂໍ້ 5 ເຈົ້າໜ້າທີ່ກວດກາອາຫານ ແລະ ຢາ ຕ້ອງໄດ້ຮ່ວມມືກັບເຈົ້າໜ້າທີ່ພາສີເພື່ອປ່ອຍອາຫານອອກກ່ອນ,ເຈົ້າໜ້າທີ່ພາສີຕ້ອງໄດ້ບົ່ງບອກໃນແບບຟອມການປ່ອຍອາຫານທີ່ກ່ຽວຂ້ອງວ່າອາຫານນັ້ນຍັງບໍ່ທັນໄດ້ຮັບການກວດກາຈາກເຈົ້າໜ້າທີ່ກວດກາອາຫານ ແລະ ຢາທີ່ປະຈຳຢູ່ດ່ານນຳເຂົ້າ, ແຕ່ການກວດກາຈະໄດ້ປະຕິບັດໃນສະຖານທີ່ທີ່ໄດ້ຕົກລົງກັນໄວ້.

ອາຫານທີ່ໄດ້ປ່ອຍແບບມີເງື່ອນໄຂຕ້ອງໄດ້ເກັບຮັກສາ ແລະ ກັກໄວ້ບໍ່ໃຫ້ແຈກຢາຍ ຫຼື ຈຳໜ່າຍ ຈົນກ່ວາການດຳເນີນການກວດກາສຳເລັດ.

ເມື່ອໃດອາຫານຫາກໄດ້ຮັບການກວດກາແລ້ວ, ເຈົ້າໜ້າທີ່ກວດກາອາຫານ ແລະ ຢາ, ພາສີ ແລະ ຜູ້ນຳເຂົ້າຕ້ອງໄດ້ລົງລາຍເຊັນຮ່ວມກັນທັນທີໃສ່ແບບຟອມການກວດກາ.

**ມາດຕາ 27 ການຕິດສະຫຼາກອາຫານນຳເຂົ້າ**

ອາຫານທີ່ນຳເຂົ້າ ຕ້ອງຕິດສະຫຼາກເປັນພາສາລາວຕາມເງື່ອນໄຂທີ່ກຳນົດໄວ້ ໃນຂໍ້ຕົກລົງວ່າດ້ວຍສະຫຼາກອາຫານ ສະບັບເລກທີ 519/ກຊສ ລົງວັນທີ 18/3/2009, ສຳລັບອາຫານທີ່ຜູ້ນຳເຂົ້າ ມີຈຸດປະສົງຈະເອົາມາຕິດສະຫຼາກຢູ່ໃນ ສປປ ລາວ ແມ່ນຕ້ອງດຳເນີນການຕິດສະຫຼາກໃຫ້ສຳເລັດພາຍໃນໄລຍະເວລາທີ່ເຈົ້າໜ້າທີ່ກວດກາອາຫານ ແລະ ຢາ ໄດ້ກຳນົດໄວ້ ຈະແມ່ນໃນກໍລະນີໃດໆກໍຕາມ.

**ມາດຕາ 28 ການດຳເນີນງານໃນກໍລະນີສຸກເສີນ**

ອາຫານນຳເຂົ້າທີ່ມີຄວາມສ່ຽງຫຼືເປັນອັນຕະລາຍຮ້າຍແຮງຕໍ່ສຸຂະພາບ, ກົມອາຫານ ແລະ ຢາ, ຂະແໜງອາຫານ ແລະ ຢາ ແຂວງ, ນະຄອນ ຕ້ອງໄດ້ປະຕິບັດມາດຕະການຕອບໂຕ້ຢ່າງຮີບດ່ວນ ໂດຍການປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງເພື່ອປະຕິບັດມາດຕະການແບບສຸກເສີນທີ່ໄດ້ລະບຸໄວ້, ໃນນັ້ນລວມມີການກັກ, ການອາຍັດ ແລະ ຢຶດສິນຄ້າທີ່ສົງໃສ, ການຮຽກເກັບຄືນ ແລະ ທຳລາຍຖິ້ມ.

ການປະຕິບັດມາດຕະການດັ່ງກ່າວຕ້ອງແຈ້ງໃຫ້ລະບົບການເຕືອນໄພກ່ຽວກັບຄວາມປອດໄພອາຫານ ໃນລະດັບຊາດ, ພາກພື້ນ (ARASFF) ແລະ ສາກົນ (INFOSAN) ແລະ ແຈ້ງການຫາປະເທດຜູ້ສົ່ງອອກ ໂດຍທາງໂທລະຄົມມະນາຄົມ.

**ມາດຕາ 29 ມາດຕະການຕໍ່ອາຫານທີ່ມີຄວາມສ່ຽງ**

ອາຫານທີ່ມີການຢັ້ງຢືນວ່າ ມີຄວາມສ່ຽງຕໍ່ສຸຂະພາບ, ບໍ່ບັນລຸມາດຕະຖານດ້ານຄຸນນະພາບ ແລະ ຄວາມປອດໄພຂອງອາຫານ ຕ້ອງໄດ້ສົ່ງກັບຄືນປະເທດຜູ້ສົ່ງອອກ.

ຄ່າໃຊ້ຈ່າຍຕ່າງໆ ໃນການບໍລິການອື່ນໆ ແມ່ນເຈົ້າຂອງຜະລິດຕະພັນອາຫານເປັນຜູ້ຮັບຜິດຊອບທັງໝົດ.

## ພາກທີ IV
## ຄວາມຖີ່ ແລະ ປະເພດຂອງການກວດກາການນຳເຂົ້າ

**ມາດຕາ 30 ຄວາມຖີ່ຂອງການກວດກາ**

ຄວາມຖີ່ຂອງການກວດກາອາຫານນຳເຂົ້າຕ້ອງອີງໃສ່ຄວາມສ່ຽງ ແລະ ປະຫວັດການເຄື່ອນໄຫວທຸລະກິດຂອງຜູ້ນຳເຂົ້າ ແລະ ຕ້ອງປະຕິບັດຕາມເນື້ອໃນຂອງ ມາດຕາ 6 ຂອງຂໍ້ຕົກລົງວ່າດ້ວຍການກວດກາອາຫານ ສະບັບເລກທີ 297/ກຊສ, ລົງວັນທີ 24 ກຸມພາ 2012.

ອາຫານທີ່ມີຄວາມສ່ຽງສູງ ຫຼື ຜູ້ທີ່ນຳເຂົ້າໃໝ່ ຫຼື ບໍ່ເຄີຍຮູ້ມາກ່ອນ ຕ້ອງເກັບຕົວຢ່າງທຸກຄັ້ງຈົນກວ່າຈະບັນລຸຕາມມາດຕະຖານທີ່ກຳນົດ, ຫຼັງຈາກນັ້ນ ການຂົນສົ່ງສິນຄ້າຈະປະຕິບັດການເກັບຕົວຢ່າງຕາມປົກກະຕິ.

ປະລິມານຕົວຢ່າງທີ່ເກັບ ຕ້ອງປະຕິບັດຕາມຄູ່ມືການກວດກາ ຫຼື ຕາມຄວາມຕ້ອງການຂອງການວິໄຈ.

**ມາດຕາ 31 ການກວດກາດ້ວຍຕາເປົ່າ**

ເຈົ້າໜ້າທີ່ກວດກາອາຫານ ແລະ ຢາ ປະຈຳການຢູ່ດ່ານ ຕ້ອງດຳເນີນການກວດກາດ້ວຍຕາເປົ່າດັ່ງນີ້:

1. ກວດກາຄວາມຖືກຕ້ອງຂອງເອກະສານໂດຍສົມທຽບໃສ່ກັບອາຫານທີ່ນຳເຂົ້າຕົວຈິງ:
   (1) ຄວາມຖືກຕ້ອງລະຫວ່າງໃບແຈ້ງລາຄາ ແລະ ໃບບິນ, ໃບມັດທໍ່ ແລະ ຈຳນວນລາຍການ, ເລກທີຊຸດຜະລິດ ແລະ ອາຫານຕົວຈິງ ແລະ ແຫຼ່ງທີ່ມາຂອງອາຫານ;
   (2) ຄວາມຖືກຕ້ອງລະຫວ່າງໃບຢັ້ງຢືນຄວາມປອດໄພອາຫານທີ່ໄດ້ຮັບການຢັ້ງຢືນກັບອາຫານທີ່ນຳເຂົ້າຕົວຈິງ.
2. ພິສູດເບິ່ງສະຫຼາກຂອງອາຫານວ່າ ບັນລຸຕາມລະບຽບການກ່ຽວກັບສະຫຼາກອາຫານ ຫຼື ບໍ່
   (1) ສະຫຼາກກົງກັບ ຮູບປະພັນຂອງອາຫານ;
   (2) ເລກທີຊຸດຜະລິດ;
   (3) ຂໍ້ມູນທີ່ສາມາດຮຽກເກັບອາຫານຄືນ;
   (4) ຊື່ ແລະ ທີ່ຢູ່ ຂອງຜູ້ຜະລິດ;
   (5) ປະເທດຕົ້ນກຳເນີດ;
   (6) ບັນຊີລາຍການສ່ວນປະກອບອາຫານ;
   (7) ວັນເດືອນປີໝົດອາຍຸການນຳໃຊ້; ແລະ
   (8) ລາຍລະອຽດອື່ນໆ ອາດກຳນົດໄວ້ໃນຄູ່ມືກວດກາອາຫານ.
3. ພິສູດເບິ່ງວັດຖຸຫຸ້ມຫໍ່ຂອງອາຫານທີ່ຂົນສົ່ງມານັ້ນ ວ່າບັນລຸຕາມລະບຽບການກ່ຽວກັບວັດຖຸການຫຸ້ມຫໍ່ອາຫານຂອງ ສປປ ລາວ ຄືດັ່ງທີ່ໄດ້ກຳນົດຢູ່ໃນນິຕິກຳທີ່ກ່ຽວຂ້ອງ, ໃນນັ້ນລວມທັງການພິສູດຢ່າງໜ້ອຍດັ່ງນີ້:

(1) ເບິ່ງວ່າການຫຸ້ມຫໍ່ນັ້ນຍັງຄົບຖ້ວນ, ບໍ່ມີຄວາມເສຍຫາຍ, ເໝາະສົມ ແລະ ແທດເໝາະກັບຜະລິດຕະພັນ ຫຼື ບໍ່

(2) ເບິ່ງຮອຍຈອດ ແລະ ຄວາມສົມບູນແບບຂອງພາຊະນະບັນຈຸອາຫານ ວ່າຍັງຄົບຖ້ວນ ຫຼື ບໍ່;

(3) ມີຂະໜາດຄວາມເສຍຫາຍ ຫຼື ເສື່ອມຄຸນ;

(4) ປະລິມານ ແລະ ປະເພດຂອງບັນຫາອື່ນໆ;

(5) ລາຍລະອຽດອື່ນໆ ທີ່ໄດ້ກຳນົດໄວ້ໃນຄູ່ມືການກວດກາ.

**ມາດຕາ 32 ການເກັບຕົວຢ່າງ ແລະ ການວິໄຈ**

ການເກັບຕົວຢ່າງ ເພື່ອການທົດສອບ ແມ່ນອີງຕາມຄວາມສ່ຽງຂອງອາຫານ ຫຼື ປະເພດຂອງການປົນເປື້ອນ. ວິທີການເກັບຕົວຢ່າງຕ້ອງອີງໃສ່ແຜນການເກັບຕົວຢ່າງ ຂອງກົດລະຫັດອາຫານສາກົນ (Codex Alimentarius).

ການວິໄຈຕົວຢ່າງ ຕ້ອງແມ່ນຫ້ອງວິໄຈທີ່ຮັບຮູ້ຢ່າງເປັນທາງການ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 23 ຂອງກົດໝາຍວ່າດ້ວຍອາຫານ.

ຜູ້ນຳເຂົ້າອາຫານ ອາດສົ່ງຕົວຢ່າງດ້ວຍຕົນເອງ ຫຼື ຕາມການຮຽກຮ້ອງ ໄປຫ້ອງທົດລອງທີ່ເປັນທາງການເພື່ອການວິໄຈ ແລະ ສົ່ງຜົນຂອງການວິໄຈໃຫ້ເຈົ້າໜ້າທີ່ກວດກາອາຫານ ແລະ ຢາ.

## ພາກທີ V
## ການບັນທຶກຂໍ້ມູນ ແລະ ການລາຍງານ

**ມາດຕາ 33 ຂໍ້ມູນສົ່ງອອກ - ນຳເຂົ້າ ແລະ ສົ່ງຜ່ານອາຫານ**

ກົມອາຫານ ແລະ ຢາ ຕ້ອງສ້າງຖານຂໍ້ມູນໃນລະດັບຊາດ ຫຼື ເອກະສານສຳຄັນທີ່ກ່ຽວຂ້ອງກັບການສົ່ງອອກ-ນຳເຂົ້າ ແລະ ສົ່ງຜ່ານອາຫານ. ຂໍ້ມູນທີ່ກ່ຽວຂ້ອງກັບການສົ່ງອອກ-ນຳເຂົ້າ ແລະ ສົ່ງຜ່ານອາຫານທີ່ໄດ້ມາຈາກກົມອາຫານ ແລະ ຢາ ແລະ ຂະແໜງອາຫານ ແລະ ຢາແຂວງ, ນະຄອນ ໃນຂອບເຂດທົ່ວປະເທດ.

ຂໍ້ມູນທີ່ເຈົ້າໜ້າທີ່ກວດກາອາຫານ ແລະ ຢາໃນຂັ້ນສູນກາງ ແລະ ແຂວງ, ນະຄອນ ຕ້ອງໄດ້ເກັບກຳ ແລະ ຈັດເຂົ້າໃສ່ຖານຂໍ້ມູນ ຫຼື ລະບົບເອກະສານ ສຳຄັນມີດັ່ງນີ້:

(1) ວັນ ເດືອນ ປີ ໃນການກວດກາ;

(2) ປະເພດອາຫານ, ລາຍການ, ນ້ຳໜັກ ແລະ ມູນຄ່າ;

(3) ສະຖານທີ່ທຳການຜະລິດ, ຜູ້ຜະລິດ ຫຼື ຜູ້ສະໜອງ ໃນປະເທດຕົ້ນກຳເນີດ;

(4) ປະເພດຂອງການກວດກາທີ່ໄດ້ປະຕິບັດ;

(5) ຜົນໄດ້ຮັບຂອງການກວດກາ;

(6) ວັນ ເດືອນ ປີ ທີ່ໄດ້ປ່ອຍອາຫານ;

(7) ວັນ ເດືອນ ປີ ແລະ ມາດຕະການທີ່ໄດ້ປະຕິບັດ ສຳລັບກໍລະນີອາຫານກວດບໍ່ຜ່ານ; ແລະ

(8) ຂໍ້ມູນອື່ນໆທີ່ຈຳເປັນ ຫຼື ຮຽກຮ້ອງ ຈາກກົມອາຫານ ແລະ ຢາ.

ການສະຫຼຸບລາຍງານ ກ່ຽວກັບຂໍ້ມູນການສົ່ງອອກ - ນຳເຂົ້າ ແລະ ສົ່ງຜ່ານອາຫານ ຕ້ອງສົ່ງໃຫ້ກົມອາຫານ ແລະ ຢາ ເປັນແຕ່ລະໄລຍະ.

**ມາດຕາ 34 ການລາຍງານຂອງຜູ້ນຳເຂົ້າ ແລະ ສົ່ງອອກອາຫານ**

ຜູ້ນຳເຂົ້າ ຫຼື ສົ່ງອອກອາຫານ ຕ້ອງລາຍງານແຜນການນຳເຂົ້າ ຫຼື ສົ່ງອອກອາຫານ ປະຈຳປີ ແລະ ບົດລາຍງານປະຈຳຫົກເດືອນ ກ່ຽວກັບອາຫານນຳເຂົ້າ ຫຼື ສົ່ງອອກຕົວຈິງ ເຖິງກົມອາຫານ ແລະ ຢາ ຫຼື ຂະແໜງອາຫານ ແລະ ຢາ ແຂວງ, ນະຄອນ ມີດັ່ງນີ້:

1. ຊະນິດອາຫານ, ລາຍການ, ນໍ້າໜັກ ແລະ ມູນຄ່າ ອາຫານທີ່ໄດ້ນຳເຂົ້າ ຫຼື ສົ່ງອອກ;
2. ເລກທີຊຸດຜະລິດ, ວັນ ເດືອນ ປີຜະລິດ, ວັນ ເດືອນ ປີໝົດອາຍຸການນຳໃຊ້ ແລະ ວັນ ເດືອນປີ ການນຳເຂົ້າ ຫຼື ສົ່ງອອກ;
3. ພາຫະນະ ແລະ ເສັ້ນທາງໃນການຂົນສົ່ງ (ທາງບົກ, ທາງນໍ້າ ຫຼື ທາງອາກາດ) ແລະ ດ່ານການນຳເຂົ້າ ຫຼື ສົ່ງອອກ;
4. ປະເທດຕົ້ນກຳເນີດ;
5. ຊື່ ແລະ ທີ່ຢູ່ຂອງຜູ້ສົ່ງອອກຈາກປະເທດສົ່ງອອກ, ປາຍທາງ ແລະ ຂອງຜູ້ນຳເຂົ້າໃນ ສປປ ລາວ;
6. ຜູ້ຜະລິດ, ລວມທັງເລກທີຂຶ້ນທະບຽນສະຖານທີ່ທຳການຜະລິດທີ່ໄດ້ຂຶ້ນທະບຽນໄວ້ແລ້ວ;
7. ບັນຊີລາຍການອາຫານທີ່ບໍ່ຜ່ານຕາມເງື່ອນໄຂຂອງລະບຽບການການນຳເຂົ້າຂອງກະຊວງ ສາທາລະນະສຸກ;
8. ບົດສະຫຼຸບກ່ຽວກັບເຫດການໃດໜຶ່ງທີ່ເກີດຂຶ້ນ ແລະ ມາດຕະການທີ່ໄດ້ປະຕິບັດຕໍ່ອາຫານທີ່ບໍ່ມີ ຄວາມປອດໄພ ສຳລັບການນຳເຂົ້າ ຫຼື ການສົ່ງອອກ; ແລະ
9. ບັນຫາອື່ນໆ ທີ່ກົມອາຫານ ແລະ ຢາ ອາດກຳນົດຂຶ້ນໃນຂໍ້ຕົກລົງຕ່າງໆ ແລະ ຮຽກຮ້ອງເພີ່ມເຕີມ ຕາມຄວາມຈຳເປັນ.

## ພາກທີ VI
## ສິດ ແລະ ໜ້າທີ່ ຂອງເຈົ້າໜ້າທີ່ກວດກາອາຫານ ແລະ ຢາປະຈຳດ່ານ

**ມາດຕາ 35 ເຈົ້າໜ້າທີ່ກວດກາອາຫານ ແລະ ຢາປະຈຳດ່ານ**

ເຈົ້າໜ້າທີ່ກວດກາອາຫານ ແລະ ຢາປະຈຳດ່ານ ຕ້ອງແມ່ນພະນັກງານອາຫານ ແລະ ຢາ ທີ່ໄດ້ຖືກແຕ່ງຕັ້ງ ແລະ ຜ່ານການຝຶກອົບຮົມກ່ຽວກັບການກວດກາອາຫານສົ່ງອອກ - ນຳເຂົ້າ ແລະ ສົ່ງຜ່ານ.

**ມາດຕາ 36 ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງເຈົ້າໜ້າທີ່ກວດກາອາຫານ ແລະ ຢາປະຈຳດ່ານ**

ເຈົ້າໜ້າທີ່ກວດກາອາຫານ ແລະ ຢາປະຈຳດ່ານ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ກວດເອກະສານການສົ່ງອອກ - ນຳເຂົ້າ ແລະ ສົ່ງຜ່ານອາຫານ;
2. ກວດກາຕົວຈິງອາຫານທີ່ສົ່ງອອກ - ນຳເຂົ້າ;
3. ອະນຸຍາດ ຫຼື ປະຕິເສດ ການສົ່ງອອກ - ນຳເຂົ້າ ແລະ ສົ່ງຜ່ານອາຫານ;
4. ອາຍັດ ຫຼື ຢຶດ ຜະລິດຕະພັນອາຫານ ແລະ ທາດເພີ່ມໃສ່ອາຫານ ທີ່ບໍ່ຖືກຕ້ອງຕາມລະບຽບການ ດ້ານອາຫານຂອງ ສປປ ລາວ;
5. ເກັບຕົວຢ່າງອາຫານ ຕາມຫຼັກການທີ່ໄດ້ກຳນົດໄວ້;
6. ແນະນຳ ແລະ ກ່າວເຕືອນຜູ້ສົ່ງອອກ-ນຳເຂົ້າ ແລະ ສົ່ງຜ່ານອາຫານ ທີ່ບໍ່ບັນລຸມາດຕະຖານ;

7. ສະຫຼຸບລາຍງານຜົນຂອງການເຄື່ອນໄຫວ ກວດກາອາຫານສົ່ງອອກ-ນຳເຂົ້າ, ສົ່ງຜ່ານ ແລະ ການຈັດຕັ້ງປະຕິບັດມາດຕະການຕ່າງໆໃຫ້ຂະແໜງອາຫານ ແລະ ຢາ ແຂວງ, ນະຄອນ ແລະ ກົມອາຫານ ແລະ ຢາ ທຸກສາມເດືອນ, ຫົກເດືອນ ແລະ ໜຶ່ງປີ.
8. ປະສານງານກັບຂະແໜງການທີ່ກ່ຽວຂ້ອງ ກັບການສົ່ງອອກ-ນຳເຂົ້າ ແລະ ສົ່ງຜ່ານອາຫານ;
9. ປະຕິບັດສິດ ແລະ ໜ້າທີ່ອື່ນໆຕາມການມອບໝາຍຂອງຂັ້ນເທິງ.

## ພາກທີ VII
## ຂໍ້ຫ້າມ, ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ
## ໝວດທີ 1
## ຂໍ້ຫ້າມ

**ມາດຕາ 37 ຂໍ້ຫ້າມສຳລັບຜູ້ສົ່ງອອກ-ນຳເຂົ້າ ແລະ ສົ່ງຜ່ານອາຫານ**

ຫ້າມຜູ້ສົ່ງອອກ-ນຳເຂົ້າ ແລະ ສົ່ງຜ່ານອາຫານປະພຶດດັ່ງນີ້:

1. ນຳເຂົ້າອາຫານທີ່ບໍ່ໄດ້ຮັບການອະນຸຍາດຈາກກົມອາຫານ ແລະ ຢາ ແລະ ອາຫານ ແລະ ຢາແຂວ, ນະຄອນ;
2. ນຳເຂົ້າອາຫານທີ່ບໍ່ໄດ້ຮັບການກວດກາ ແລະ ອະນຸຍາດຈາກເຈົ້າໜ້າທີ່ກວດກາອາຫານ ແລະ ຢາ ປະຈຳດ່ານ;
3. ປອມແປງເອກະສານ ຫຼື ສະໜອງເອກະສານປອມ
4. ນຳເຂົ້າອາຫານທີ່ບໍ່ມີສະຫຼາກ ຫຼື ບໍ່ມີສະຕິກເກີ້ເປັນພາສາລາວ;
5. ນຳເຂົ້າອາຫານທີ່ໃກ້ຈະໝົດອາຍຸ ຫຼື ໝົດອາຍຸໃນການບໍລິໂພກ;
6. ນຳເຂົ້າອາຫານທີ່ມີລັກສະນະຂັດກັບວັດທະທຳ ແລະ ຮີດຄອງປະເພນີຂອງ ສປປ ລາວ;
7. ສົ່ງອອກ-ນຳເຂົ້າອາຫານ ທີ່ນອນຢູ່ໃນບັນຊີລາຍການອາຫານຕ້ອງຫ້າມ;
8. ນຳເຂົ້າອາຫານ ທີ່ບໍ່ບັນລຸມາດຕະຖານຄຸນນະພາບ ແລະ ຄວາມປອດໄພ;
9. ຈຳໜ່າຍ ອາຫານສຳລັບສົ່ງຜ່ານ ຢູ່ໃນດິນແດນຂອງ ສປປ ລາວ;
10. ນຳເຂົ້າອາຫານທີ່ມີຄວາມສ່ຽງສູງ ແລະ ອາຫານໃໝ່ທີ່ບໍ່ໄດ້ຂຶ້ນທະບຽນນຳ ກົມອາຫານ ແລະ ຢາ.

**ມາດຕາ 38 ຂໍ້ຫ້າມສຳລັບເຈົ້າໜ້າທີ່ກວດກາອາຫານ ແລະ ຢາປະຈຳດ່ານ**

ຫ້າມເຈົ້າໜ້າທີ່ກວດກາອາຫານ ແລະ ຢາປະຈຳດ່ານປະພຶດດັ່ງນີ້:

1. ພະນັກງານອາຫານ ແລະ ຢາປະຈຳດ່ານປ່ອຍອາຫານສົ່ງອອກ-ນຳເຂົ້າ ແລະ ສົ່ງຜ່ານທີ່ບໍ່ໄດ້ຮັບອະນຸມັດຈາກກົມອາຫານ ແລະ ຢາ, ອາຫານ ແລະ ຢາ ແຂວງ, ນະຄອນ;
2. ປະຕິບັດໜ້າທີ່ ທີ່ຂາດຄວາມຍຸຕິທຳ, ລຳອຽງ ແລະ ບໍ່ຖືກຕ້ອງຕາມລະບຽບກົດໝາຍ;
3. ເປີດເຜີຍຄວາມລັບຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ພົບເຫັນໃນເວລາປະຕິບັດການກວດກາ;
4. ກົດໜ່ວງຖ່ວງດຶງ ຂັ້ນຕອນການສົ່ງອອກ-ນຳເຂົ້າ ແລະ ສົ່ງຜ່ານ, ທວງເອົາສິນບົນ, ຮຽກຮ້ອງຄ່າຕອບແທນ, ສວຍໃຊ້ຖານະຕຳແໜ່ງ, ສິດ ແລະ ໜ້າທີ່ທາງລັດຖະການເພື່ອຜົນປະໂຫຍດສ່ວນຕົວ;

5. ປອມແປງເອກກະສານ ຫຼື ນໍາໃຊ້ເອກກະສານປອມ ຫຼື ສະໜອງຂໍ້ມູນທີ່ເປັນຄວາມລັບຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໂດຍບໍ່ໄດ້ຮັບການອະນຸຍາດ;
6. ປົກປິດ, ສະໜັບສະໜູນ, ຊ່ວຍເຫຼືອ ແລະ ສົມຮູ້ຮ່ວມຄິດກັບຜູ້ສົ່ງອອກ-ນໍາເຂົ້າ ແລະ ສົ່ງຜ່ານ ອາຫານ ທີ່ບໍ່ບັນລຸມາດຕະຖານຄຸນນະພາບ ແລະ ຄວາມປອດໄພ;
7. ລະເມີດຫຼັກການ ການກວດກາສົ່ງອອກ-ນໍາເຂົ້າ ແລະ ສົ່ງຜ່ານ;
8. ປະຕິບັດພຶດຕິກໍາອື່ນໆ ທີ່ຂັດກັບລະບຽບກົດໝາຍ.

## ໝວດທີ 2
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 39 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ດ້ວຍຮູບການທີ່ເໝາະສົມ ຈາກກະຊວງສາທາລະນະສຸກ.

### ມາດຕາ 40 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ປັບໃໝ ຫຼື ລົງໂທດ ຕາມກໍລະນີເບົາ ຫຼື ໜັກ ດັ່ງລຸ່ມນີ້:

1. ການລະເມີດຄັ້ງທີ່ 1 ຕໍ່ມາດຕາຕ່າງໆລຸ່ມນີ້:
   - ມາດຕາ 20 ຂໍ້ 1 ແລະ ຂໍ້ 2, ມາດຕາ 24, ມາດຕາ 25 ແລະ ມາດຕາ 35 ຂໍ້ 4, ຂໍ້ 6 ແລະ ຂໍ້ 10 ຖືກກ່າວເຕືອນ ແລະ ຂຽນຄໍາປະຕິຍານເປັນລາຍລັກອັກສອນ;
   - ມາດຕາ 19 ຖືກກ່າວເຕືອນ ແລະ ຂຽນຄໍາປະຕິຍານເປັນລາຍລັກອັກສອນ;
   - ມາດຕາ 35 ຂໍ້ 3 ຖືກກ່າວເຕືອນ, ຂຽນຄໍາປະຕິຍານເປັນລາຍລັກອັກສອນ ແລະ ປັບ ໃໝ 2,500,000 ກີບ;
   - ມາດຕາ 35 ຂໍ້ 1-2 ແລະ 5 ຖືກກ່າວເຕືອນ, ຂຽນຄໍາປະຕິຍານເປັນລາຍລັກອັກສອນ ແລະ ປັບໃໝ 5,000,000 ກີບ;
   - ມາດຕາ 35 ຂໍ້ 7-9 ຖືກກ່າວເຕືອນ, ຂຽນຄໍາປະຕິຍານເປັນລາຍລັກອັກສອນ, ຖືກປັບ ໃໝ 5,000,000 ແລະ ຍຶດສິນຄ້າໄວ້.
2. ການລະເມີດຄັ້ງທີ່ 2 ຕໍ່ມາດຕາຕ່າງໆລຸ່ມນີ້:
   - ມາດຕາ 20 ຂໍ້ 1 ແລະ ຂໍ້ 2, ມາດຕາ 24, ມາດຕາ 25, ແລະ ມາດຕາ 35 ຂໍ້ 4, ຂໍ້ 6 ແລະ ຂໍ້ 10 ຖືກກ່າວເຕືອນ, ຂຽນຄໍາປະຕິຍານເປັນລາຍລັກອັກສອນ ແລະ ປັບໃໝ 1,000,000 ກີບ;
   - ມາດຕາ 19 ຖືກກ່າວເຕືອນ, ຂຽນຄໍາປະຕິຍານເປັນລາຍລັກອັກສອນ ແລະ ປັບໃໝສອງ ເທົ່າຂອງມູນຄ່າຂອງສິນຄ້າຕາມທ້ອງຕະຫຼາດ;
   - ມາດຕາ 35 ຂໍ້ 3 ຖືກກ່າວເຕືອນ, ຂຽນຄໍາປະຕິຍານເປັນລາຍລັກອັກສອນ ແລະ ປັບ ໃໝ 5,000,000 ກີບ;

- ມາດຕາ 35 ຂໍ້ 1-2 ແລະ 5 ຖືກກ່າວເຕືອນ, ຂຽນຄໍາປະຕິຍານເປັນລາຍລັກອັກສອນ, ປັບໃໝ 10,000,000 ກີບ ແລະ ປິດກິດຈະການຊົ່ວຄາວ ຫົກເດືອນ ຫາ ໜຶ່ງປີ ໂດຍປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ;
- ມາດຕາ 35 ຂໍ້ 7-9 ຂຽນຄໍາປະຕິຍານເປັນລາຍລັກອັກສອນ, ປັບໃໝ 10,000,000 ກີບ, ຢຶດສິນຄ້າໄວ້ ແລະ ປິດກິດຈະການຊົ່ວຄາວ ຫົກເດືອນ ຫາ ໜຶ່ງປີ ໂດຍປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ.

3. ການລະເມີດຄັ້ງທີ່ 3 ຕໍ່ມາດຕາຕ່າງໆລຸ່ມນີ້:

- ມາດຕາ 20 ຂໍ້ 1 ແລະ ຂໍ້ 2, ມາດຕາ 24, ມາດຕາ 25, ແລະ ມາດຕາ 35 ຂໍ້ 4, ຂໍ້ 6 ແລະ ຂໍ້ 10 ຖືກກ່າວເຕືອນ, ຂຽນຄໍາປະຕິຍານເປັນລາຍລັກອັກສອນ, ປັບໃໝ 5,000,000 ກີບ ແລະ ປິດກິດຈະການຊົ່ວຄາວຫົກເດືອນ ຫາ ໜຶ່ງປີ ໂດຍປະສານສົມທົບກັບຂະແໜງ ການທີ່ກ່ຽວຂ້ອງ;
- ມາດຕາ 19 ຖືກກ່າວເຕືອນ, ຂຽນຄໍາປະຕິຍານເປັນລາຍລັກອັກສອນ ແລະ ປັບໃໝ ສີ່ ເທົ່າຂອງມູນຄ່າຂອງສິນຄ້າຕາມທ້ອງຕະຫຼາດ;
- ມາດຕາ 35 ຂໍ້ 3 ຖືກກ່າວເຕືອນ, ຂຽນຄໍາປະຕິຍານເປັນລາຍລັກອັກສອນ, ປັບໃໝ 10,000,000 ກີບ ແລະ ປິດກິດຈະການຊົ່ວຄາວ 6 ເດືອນ ຫາ ໜຶ່ງປີ ໂດຍປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ;
- ມາດຕາ 35 ຂໍ້ 1-2 ລະ ຂໍ້ 5 ປັບໃໝ 15,000,000 ກີບ ແລະ ປິດກິດຈະການຖາວອນ ໂດຍປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ;
- ມາດຕາ 35 ຂໍ້ 7-9 ຖືກປັບໃໝ 15,000,000 ກີບ, ຢຶດສິນຄ້າໄວ້ ແລະ ປິດກິດຈະການຖາວອນ ໂດຍປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ.

ການລະເມີດບໍ່ວ່າຈະເປັນຄັ້ງທີ 1, 2 ແລະ 3 ກໍຕາມ, ຖ້າຫາກກໍ່ໃຫ້ເກີດອັນຕະລາຍຮ້າຍແຮງຕໍ່ສຸຂະພາບ ແລະ ເສດຖະກິດ ຫຼື ແຕະຕ້ອງເຖິງຊີວິດຂອງຜູ້ບໍລິໂພກ, ຜູ້ລະເມີດຈະຖືກດໍາເນີນຄະດີຕາມລະບຽບກົດໝາຍ.

**ມາດຕາ 41 ມາດຕະການຕໍ່ພະນັກງານອາຫານ ແລະ ຢາປະຈໍາດ່ານ ແລະ ພະນັກງານທີ່ກ່ຽວຂ້ອງ**

ພະນັກງານກວກາອາຫານ ແລະ ຢາປະຈໍາດ່ານ ແລະ ພະນັກງານທີ່ກ່ຽວຂ້ອງທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ໂຈະການເລື່ອນຊັ້ນ ແລະ ຖືກລົງວິໄນຕາມລະບຽບລັດຖະກອນສະບັບນໍາໃຊ້ປະຈຸບັນ.

**ມາດຕາ 42 ການໂຈະ ແລະ ການລົບລ້າງໃບອະນຸຍາດສົ່ງອອກ - ນໍາເຂົ້າ ແລະ ສົ່ງຜ່ານ**

ກົມອາຫານ ແລະ ຢາ, ຂະແໜງອາຫານ ແລະ ຢາ ແຂວງ, ນະຄອນ ສາມາດໂຈະ ແລະ ລົບລ້າງໃບອະນຸຍາດສົ່ງອອກ - ນໍາເຂົ້າ ແລະ ສົ່ງຜ່ານອາຫານ ຕາມແຕ່ລະກໍລະນີດັ່ງນີ້:

1. ອາຫານນໍາເຂົ້າທີ່ພາໃຫ້ເກີດພະຍາດ ຫຼື ກໍລະນີສຸກເສີນ ຈະຖືກໂຈະ;
2. ຜູ້ຖືໃບອະນຸຍາດ ຝ່າຝືນລະບຽບກົດໝາຍວ່າດ້ວຍອາຫານ, ນິຕິກໍາໃດໜຶ່ງທີ່ກ່ຽວຂ້ອງ ແລະ ຂໍ້ຕົກລົງສະບັບນີ້ ຈະຖືກລົບລ້າງ;
3. ໃບອະນຸຍາດນໍາເຂົ້າຖືກຮັບຮອງ ແຕ່ຜູ້ນໍາເຂົ້າບໍ່ມາເອົາພາຍໃນກໍານົດ 90 ວັນ ຈະຖືກລົບລ້າງ;

4. ການແຈ້ງເຕືອນຈາກພາກພື້ນ ແລະ ສາກົນກ່ຽວກັບຜົນກະທົບ ຫຼື ຄວາມສ່ຽງຂອງອາຫານທີ່ຈະສົ່ງອອກ - ນຳເຂົ້າ ແລະ ສົ່ງຜ່ານ ຈະຖືກໂຈະ.

## ພາກທີ VIII
## ການບໍ່ເສຍຄ່າທົດແທນ, ການເກັບຄ່າທຳນຽມ ແລະ ການຮ້ອງຮຽນ

**ມາດຕາ 43 ການບໍ່ເສຍຄ່າທົດແທນ**

ກະຊວງສາທາລະນະສຸກ ຫຼື ເຈົ້າໜ້າທີ່ກວດກາອາຫານ ແລະ ຢາປະຈຳດ່ານ ຈະບໍ່ຮັບຜິດຊອບຕໍ່ການເສຍຫາຍໃດໆທີ່ເກີດຈາກການອາຍັດ ຫຼື ຢຶດອາຫານ, ການສັ່ງຢຸດກິດຈະການທຸລະກິດອາຫານ ຊົ່ວຄາວ ຫຼື ການປິດຢ່າງຖາວອນ, ການດຳເນີນການ ແລະ ການຕັດສິນໃດໜຶ່ງທີ່ຖືກຕ້ອງຕາມກົດ ໝາຍວ່າດ້ວຍອາຫານ ຫຼື ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 44 ການເກັບຄ່າທຳນຽມ**

ຜູ້ດຳເນີນທຸລະກິດການສົ່ງອອກ - ນຳເຂົ້າ ແລະ ສົ່ງຜ່ານອາຫານ ຕ້ອງຈ່າຍຄ່າທານຽມສຳລັບການອະນຸຍາດສົ່ງອອກ - ນຳເຂົ້າ ແລະ ສົ່ງຜ່ານ ແລະ ຄ່າທຳນຽມໃນການບໍລິການອື່ນໆທີ່ຕິດພັນກັບການກວດກາ, ການເກັບຕົວຢ່າງ ແລະ ການວິໄຈຕົວຢ່າງ, ການກວດສອບ ແລະ ການອອກໃບຢັ້ງຢືນຕ່າງໆ ຕາມລະບຽບການທີ່ໄດ້ກຳນົດໄວ້ໃນລັດຖະບັນຍັດຂອງປະທານປະເທດ.

**ມາດຕາ 45 ການຮ້ອງຮຽນ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງທີ່ບໍ່ໄດ້ຮັບຄວາມເປັນທຳຈາກການປະຕິບັດງານ ຂອງເຈົ້າໜ້າທີ່ກວດກາອາຫານ ແລະ ຢາປະຈຳດ່ານໃດໜຶ່ງ, ຜູ້ກ່ຽວມີສິດຍື່ນຄຳຮ້ອງຮຽນທາງບໍລິຫານພ້ອມດ້ວຍເອກະສານ ແລະ ຫຼັກຖານຕ່າງໆທີ່ມີ ເຖິງຂະແໜງການທີ່ກ່ຽວຂ້ອງຕາມແຕ່ລະຂັ້ນ.

## ພາກທີ IX
## ບົດບັນຍັດສຸດທ້າຍ

**ມາດຕາ 46 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມອາຫານ ແລະ ຢາ ເປັນເຈົ້າການໃນການຜັນຂະຫຍາຍ ແລະ ສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ປະກົດຜົນເປັນຈິງ.

**ມາດຕາ 47 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນບັງຄັບໃຊ້ພາຍໃນ 60 ວັນ ນັບແຕ່ມື້ລົງລາຍເຊັນ ແລະ ລົງຈົດໝາຍເຫດທາງລັດຖະການເປັນຕົ້ນໄປ.

ຂໍ້ຕົກລົງ ຫຼື ເນື້ອໃນຂໍ້ຕົກລົງ ແລະ ລະບຽບການ ສະບັບໃດໜຶ່ງ ທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກລົບລ້າງ.

**ລັດຖະມົນຕີ**

ຮສ ດຣ. ບຸນກອງ ສີຫາວົງ